ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ: ໑໕໔ /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 2 0 SEP 2012

# ຂໍ້ຕົກລົງ

## ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ

- ອີງຕາມ ກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05 /ສພຊ, ລົງວັນທີ 14 ຕຸລາ1999;
- ອີງຕາມ ກົດໝາຍວ່າດ້ວຍ ທະນາຄານທຸລະກິດ ສະບັບເລກທີ 03 /ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມ ການຄົ້ນຄວ້ານຳສະເໜີ ຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 122/ກຄທ ລົງວັນທີ 30/07/2012.

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ໄດ້ກຳນົດບັນດາລະບຽບຫຼັກການ ໃນການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອຂອງ ທະນາຄານ ແຫ່ງ ສປປ ລາວ, ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນໃນການເກັບຮັກສາ, ລາຍງານຂໍ້ມູນຂ່າວສານສິນເຊື່ອຂອງລູກຄ້າ ເພື່ອສະໜອງຂໍ້ມູນຂ່າວສານສິນເຊື່ອດັ່ງກ່າວນັ້ນ ໃຫ້ແກ່ສະມາຊິກຂອງສູນຂໍ້ມູນຂ່າວສານສິນເຊື່ອ ແນໃສ່ຊ່ວຍຫຼຸດຜ່ອນ ແລະ ຈຳກັດຄວາມສ່ຽງທີ່ອາດຈະເກີດຂຶ້ນໃນການໃຫ້ສິນເຊື່ອ ຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ.



ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ : 4304 BNL. VTE.LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110 E-mail:Bol@pan-laos.net.la

**ມາດຕາ 2. ຄວາມໝາຍຂອງບັນດາຄຳສັບ**

ບັນດາຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. ສະມາຊິກ ໝາຍເຖິງ ບັນດາທະນາຄານທຸລະກິດ, ບັນດາສາຂາທະນາຄານທຸລະກິດຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ ແລະ ສະຖາບັນການເງິນຕ່າງໆຕາມການຕົກລົງ ຂອງ ທະນາຄານ ແຫ່ງ ສປປ ລາວ;
2. ລູກຄ້າ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີສາຍພົວພັນສິນເຊື່ອກັບສະມາຊິກ;
3. ສູນຂໍ້ມູນຂ່າວສານສິນເຊື່ອ ຊຽນຫຍໍ້ "ສຂສ" ໝາຍເຖິງ ບ່ອນລວບລວມຂໍ້ມູນສິນເຊື່ອ ຈາກບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ແລະ ສະໜອງຂໍ້ມູນສິນເຊື່ອ ໃຫ້ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ເພື່ອເປັນບ່ອນອີງໃນການພິຈາລະນາການໃຫ້ສິນເຊື່ອ;
4. ຂໍ້ມູນຂ່າວສານສິນເຊື່ອ ໝາຍເຖິງ ຂໍ້ມູນທົ່ວໄປກ່ຽວກັບລູກຄ້າ, ຂໍ້ມູນກ່ຽວກັບສະພາບສິນເຊື່ອ ລວມທັງການຄ້ຳປະກັນ, ຖານະການເງິນ ແລະ ຂໍ້ມູນຕ່າງໆຕາມການກຳນົດຂອງ ສູນຂໍ້ມູນຂ່າວສານສິນເຊື່ອ ທະນາຄານ ແຫ່ງ ສປປ ລາວ;
5. ການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ແມ່ນການເກັບກຳຂໍ້ມູນ, ແກ້ໄຂຂໍ້ມູນ, ວິເຄາະຂໍ້ມູນ, ຈັດປະເພດທຸລະກິດ, ຈັດປະເພດລູກຄ້າ, ແລກປ່ຽນຂໍ້ມູນສິນເຊື່ອ, ບໍລິການສະໜອງ ແລະ ພັດທະນາຊຸດຄົ້ນນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ, ການສ້າງຜະລິດຕະພັນ, ການພັດທະນາທາງດ້ານການບໍລິການ, ການປະກອບອຸປະກອນເຕັກໂນໂລຢີໃໝ່ທັນສະໄໝຮັບໃຊ້ແກ່ການບໍລິການຂໍ້ມູນຂ່າວສານສິນເຊື່ອ;
6. ການຍິນຍອມ ແມ່ນການອະນຸຍາດຢ່າງເປັນລາຍລັກອັກສອນຂອງລູກຄ້າໃຫ້ ສຂສ ເປີດເຜີຍຂໍ້ມູນສ່ວນຕົວ, ຂໍ້ມູນຖານະການເງິນ ນຳໄປແລກປ່ຽນໃນສູນຂໍ້ມູນຂ່າວສານສິນເຊື່ອກັບພາກສ່ວນອື່ນໄດ້;
7. ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອ ແມ່ນການກຳນົດເນື້ອໃນຂອງຂໍ້ມູນສ່ວນຕົວ, ຂໍ້ມູນດ້ານສິນເຊື່ອໂດຍ ທະນາຄານ ແຫ່ງ ສປປ ລາວ ກຳນົດອອກຄື:
   - ແບບລາຍງານຂໍ້ມູນສິນເຊື່ອ;
   - ບັນດາຜະລິດຕະພັນຕ່າງໆຂອງສູນຂໍ້ມູນຂ່າວສານສິນເຊື່ອສະໜອງໃຫ້ບັນດາສະມາຊິກ;
   - ແບບລາຍງານຖານະການເງິນ;
   - ແບບລາຍງານ ແລະ ສະຖິຕິອື່ນໆ.

**ມາດຕາ 3. ນະໂຍບາຍສົ່ງເສີມວຽກງານຂໍ້ມູນຂ່າວສານສິນເຊື່ອ**

1. ຂໍ້ມູນຂ່າວສານສິນເຊື່ອ ແມ່ນປັດໄຈທີ່ສຳຄັນໃນການຕັດສິນໃຈອະນຸມັດສິນເຊື່ອ ຂອງຜູ້ບໍລິຫານທະນາຄານທຸລະກິດ ແລະ ສະຖາບັນການເງິນ. ສູນຂໍ້ມູນຂ່າວສານສິນເຊື່ອ ທະນາຄານ ແຫ່ງ ສປປ ລາວ ຕ້ອງລວບລວມຂໍ້ມູນສິນເຊື່ອຂອງ ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ເພື່ອສະໜອງຂໍ້ມູນຂ່າວສານສິນເຊື່ອດັ່ງກ່າວນັ້ນໃຫ້ແກ່ບັນດາສະມາຊິກ, ລູກຄ້າຂອງສະ

ມາຊິກ, ການຈັດຕັ້ງຂອງລັດ ທີ່ມີຄວາມຕ້ອງການນຳໃຊ້ຂໍ້ມູນ ແຕ່ຕ້ອງປະຕິບັດຕາມລະບຽບການ ທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ;

2. ຕ້ອງພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ມີຫຼາກຫຼາຍຜະລິດຕະພັນ, ມີຄວາມທັນສະໄໝ ເພື່ອສະໜອງການບໍລິການໃຫ້ແກ່ສະມາຊິກຢ່າງມີປະສິດທິພາບ;
3. ທະນາຄານ ແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບຊຸກຍູ້ໃຫ້ສູນຂໍ້ມູນຂ່າວສານສິນເຊື່ອ ແລະ ສົ່ງເສີມໃຫ້ທຸກພາກສ່ວນ ມີສ່ວນຮ່ວມໃນການພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ນັບມື້ກ້າວໜ້າ ແລະ ທັນສະໄໝ ເພື່ອກ້າວໄປໃຫ້ທັນກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ.

### ມາດຕາ 4. ການແລກປ່ຽນຂໍ້ມູນ

ສະມາຊິກ ຂອງ ສຂສ ກ່ອນຈະພິຈາລະນາໃຫ້ສິນເຊື່ອແກ່ລູກຄ້າຂອງຕົນ ຕ້ອງໃຫ້ລູກຄ້າຂອງຕົນຍິນຍອມເປັນລາຍລັກອັກສອນ ໃຫ້ສະມາຊິກ ແລະ ສູນຂໍ້ມູນຂ່າວສານສິນເຊື່ອຂອງທະນາຄານ ແຫ່ງ ສປປ ລາວ ນຳເອົາຂໍ້ມູນທົ່ວໄປ, ຂໍ້ມູນສິນເຊື່ອ, ຖານະການເງິນ ແລະ ຂໍ້ມູນທີ່ມີໃນແບບລາຍງານທີ່ ທະນາຄານ ແຫ່ງ ສປປ ລາວ ກຳນົດອອກ ເພື່ອນຳໄປເປີດເຜີຍແລກປ່ຽນກັບສະມາຊິກ ຫຼື ນຳໃຊ້ເຂົ້າໃນເປົ້າໝາຍໃດໜຶ່ງຕາມລະບຽບການຂອງ ສຂສ. ການເປີດເຜີຍ ແລະ ແລກປ່ຽນຂໍ້ມູນຕ້ອງຮັບປະກັນຄວາມຖືກຕ້ອງ ແລະ ຄວາມເປັນຈິງ.

## ໝວດທີ II
## ສູນຂໍ້ມູນຂ່າວສານສິນເຊື່ອ

### ມາດຕາ 5. ທີ່ຕັ້ງ ແລະ ພາລະບົດບາດຂອງສູນຂໍ້ມູນຂ່າວສານສິນເຊື່ອ

ສຂສ ແມ່ນພາກສ່ວນໜຶ່ງໃນໂຄງປະກອບການຈັດຕັ້ງ ຂອງກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ ມີພາລະບົດບາດ ເປັນເສນາທິການໃຫ້ຄະນະກົມໃນການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ.

### ມາດຕາ 6. ສິດ ແລະ ໜ້າທີ່ຂອງ ສູນຂໍ້ມູນຂ່າວສານສິນເຊື່ອ

ສຂສ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ຄົ້ນຄວ້ານະໂຍບາຍພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ, ລະບຽບການຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອເພື່ອສະເໜີ ຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ພິຈາລະນາຮັບຮອງເອົາ;
2. ເກັບກຳຂໍ້ມູນທົ່ວໄປ, ຂໍ້ມູນສິນເຊື່ອ, ຖານະການເງິນ ແລະ ຂໍ້ມູນອື່ນໆຈາກສະມາຊິກ ພ້ອມທັງເກັບຮັກສາຂໍ້ມູນດັ່ງກ່າວ ໄວ້ໃນຖານຂໍ້ມູນຢ່າງປອດໄພ;
3. ສັງລວມ, ນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ ສ້າງຜະລິດຕະພັນເພື່ອສະໜອງໃຫ້ ສະມາຊິກ ແລະ ບຸກຄົນ ທີ່ມີສ່ວນພົວພັນຕາມລະບຽບການຂອງ ສຂສ;

4. ພັດທະນາລະບົບຂໍ້ມູນຂ່າວສານສິນເຊື່ອໃຫ້ທັນສະໄໝ, ສ້າງຜະລິດຕະພັນທີ່ຫຼາກຫຼາຍ ເພື່ອບໍລິການສະມາຊິກ ແລະ ສັງຄົມ;
5. ກຳນົດແບບລາຍງານຂໍ້ມູນສິນເຊື່ອເພື່ອໃຫ້ ສະມາຊິກປະຕິບັດ;
6. ຮັບປະກັນການບໍລິຫານຂໍ້ມູນຂ່າວສານສິນເຊື່ອໃຫ້ມີປະສິດທິພາບ ແລະ ມີຄວາມປອດໄພ;
7. ສະໜອງຂໍ້ມູນສິນເຊື່ອໃຫ້ແກ່ພາກສ່ວນກ່ຽວຂ້ອງຂອງ ທະນາຄານ ແຫ່ງ ສປປ ລາວ ເພື່ອນຳໃຊ້ເຂົ້າໃນວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ວຽກງານອື່ນ;
8. ຝຶກອົບຮົມວຽກງານຂໍ້ມູນຂ່າວສານສິນເຊື່ອໃຫ້ພະນັກງານຂອງ ສຂສ ແລະ ສະມາຊິກ ເພື່ອຍົກສູງຄວາມສາມາດໃນວຽກງານຂໍ້ມູນຂ່າວສານສິນເຊື່ອ;
9. ປະສານງານກັບອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ເພື່ອປະຕິບັດພາລະບົດບາດໜ້າທີ່ຂອງ ສຂສ ໃຫ້ສຳເລັດ;
10. ຮັບປະກັນການປະຕິບັດສິດ ແລະ ໜ້າທີ່ຂອງສະມາຊິກຕາມລະບຽບການ ທີ່ກຳນົດໄວ້ຢ່າງເຂັ້ມງວດ, ແກ້ໄຂການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງຕາມການສະເໜີຂອງລູກຄ້າ ຂອງສະມາຊິກ;
11. ກວດກາຂໍ້ມູນສິນເຊື່ອຂອງບັນດາສະມາຊິກ ຕາມທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້;
12. ປະຕິບັດມາດຕະການຕໍ່ສະມາຊິກ ຜູ້ລະເມີດລະບຽບຄຸ້ມຄອງວຽກງານຂໍ້ມູນຂ່າວສານສິນເຊື່ອ;
13. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງຄະນະກົມ.

## ໝວດທີ III
## ສະມາຊິກຂອງສູນຂໍ້ມູນຂ່າວສານສິນເຊື່ອ

### ມາດຕາ 7. ການເຂົ້າເປັນສະມາຊິກ

ທະນາຄານທຸລະກິດ ແລະສະຖາບັນການເງິນທີ່ຮັບເງິນຝາກ ຫຼື ປ່ອຍສິນເຊື່ອ ຕ້ອງເຂົ້າເປັນສະມາຊິກຂອງ ສຂສ. ສຳລັບການເຂົ້າເປັນສະມາຊິກຕ້ອງປະກອບເອກະສານດັ່ງນີ້:

1. ໃບຄຳຮ້ອງສະໝັກເຂົ້າເປັນສະມາຊິກ;
2. ສຳເນົາໃບອະນຸຍາດສ້າງຕັ້ງທະນາຄານ;
3. ສຳເນົາໃບທະບຽນວິສາຫະກິດ.

ສຳລັບສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານ ແຫ່ງ ສປປ ລາວ ຈະມີລະບຽບການສະເພາະກ່ຽວກັບການເຂົ້າເປັນສະມາຊິກ.

### ມາດຕາ 8. ສິດ ແລະ ໜ້າທີ່ຂອງສະມາຊິກ

ສະມາຊິກ ຂອງ ສຂສ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ຈັດຕັ້ງປະຕິບັດບັນດາຂໍ້ກຳນົດກົດລະບຽບ ແລະ ນິຕິກຳອື່ນໆກ່ຽວຂ້ອງກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ;
2. ພັດທະນາໂປຼແກຼມຂໍ້ມູນຂ່າວສານສິນເຊື່ອ ເປັນຕົ້ນການສ້າງລະບົບຖານຂໍ້ມູນໃຫ້ຄົບຖ້ວນ ຕາມແບບລາຍງານຂໍ້ມູນສິນເຊື່ອ ທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ;
3. ເກັບກຳ, ສະໜອງຂໍ້ມູນສິນເຊື່ອໃຫ້ຖືກຕ້ອງຄົບຖ້ວນ, ຊັດເຈນ ແລະ ທັນເວລາຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້. ທຸກການປ່ຽນແປງຂໍ້ມູນສິນເຊື່ອຂອງລູກຄ້າ, ສະມາຊິກ ຂອງ ສຂສ ຕ້ອງ ດຳເນີນການບັນທຶກກ່ຽວກັບການປ່ຽນແປງຂໍ້ມູນດັ່ງກ່າວ;
4. ຮັກສາຄວາມລັບ ແລະ ນຳໃຊ້ຂໍ້ມູນສິນເຊື່ອຕາມລະບຽບການໄດ້ກຳນົດໄວ້;
5. ບຳລຸງກໍ່ສ້າງ ແລະ ປະກອບພະນັກງານເຮັດວຽກຂໍ້ມູນຂ່າວສານສິນເຊື່ອໃຫ້ພຽງພໍ ແລະ ມີປະສິດທິພາບ;
6. ຈ່າຍຄ່າທຳນຽມບໍລິການການເຂົ້າຄົ້ນຫາ ແລະ ນຳໃຊ້ຂໍ້ມູນຂ່າວສານສິນເຊື່ອ ຕາມລະບຽບການ ທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການກຳນົດຂອງ ສຂສ.

### ມາດຕາ 9. ການບັນທຶກຂໍ້ມູນສິນເຊື່ອ

1. ສະມາຊິກ ຂອງ ສຂສ ຕ້ອງມີລະບົບຖານຂໍ້ມູນ ເພື່ອຮັບໃຊ້ວຽກງານຂໍ້ມູນຂ່າວສານສິນເຊື່ອ. ການບັນທຶກຂໍ້ມູນສິນເຊື່ອຕ້ອງຄົບຖ້ວນ, ຊັດເຈນຕາມແບບລາຍງານຂໍ້ມູນສິນເຊື່ອ ທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດອອກ;
2. ທຸກການປ່ຽນແປງຂໍ້ມູນສິນເຊື່ອຂອງລູກຄ້າຕ້ອງບັນທຶກໃຫ້ຄົບຖ້ວນໃນທັນທີທັນໃດ.

### ມາດຕາ 10. ການສົ່ງຂໍ້ມູນສິນເຊື່ອ

ສະມາຊິກ ຂອງ ສຂສ ຕ້ອງສົ່ງຂໍ້ມູນສິນເຊື່ອ ຕາມແບບລາຍງານຂໍ້ມູນສິນເຊື່ອ ໃຫ້ ສຂສ ທະນາຄານແຫ່ງ ສປປ ລາວ ເປັນຕາຕະລາງລາຍງານຕາມຮູບແບບຂອງສູນຂໍ້ມູນຂ່າວສານສິນເຊື່ອກຳນົດໃຫ້ ຢ່າງໜ້ອຍເດືອນລະ 01 ຄັ້ງ ຊ້າສຸດບໍ່ໃຫ້ກາຍ ວັນທີ 05 ຂອງເດືອນຖັດໄປ.

ພາຍຫຼັງທີ່ ສຂສ ກວດກາຄວາມຖືກຕ້ອງຂອງຂໍ້ມູນທີ່ໄດ້ຮັບຈາກສະມາຊິກ ແລະ ເຫັນວ່າຂໍ້ມູນມີຄວາມຜິດພາດ, ສຂສ ຈະແຈ້ງຂໍ້ຜິດພາດດັ່ງກ່າວໃຫ້ສະມາຊິກຊາບ ແລະ ສະມາຊິກ ຕ້ອງດັດແກ້ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ສຳເລັດ ແລະ ສົ່ງໃຫ້ ສຂສ ພາຍໃນ 02 ວັນເຮັດວຽກທະນາຄານ ຫຼັງຈາກຮັບຮູ້ວ່າຂໍ້ມູນດັ່ງກ່າວບໍ່ຖືກຕ້ອງ.

### ມາດຕາ 11. ການເກັບຮັກສາຂໍ້ມູນສິນເຊື່ອ

ສະມາຊິກ ຂອງ ສຂສ ຕ້ອງເກັບຮັກສາຂໍ້ມູນສິນເຊື່ອ ດັ່ງນີ້:

1. ໜີ້ສິນຂອງລູກຄ້າທີ່ເປັນໜີ້ປົກກະຕິ, ໜີ້ສິນທີ່ມີບັນຫາບໍ່ສາມາດຊໍາລະຕາມກໍານົດສັນຍາ ແມ່ນໃຫ້ເກັບໄວ້ໃນຖານຂໍ້ມູນທີ່ມີຄວາມປອດໄພ;
2. ໜີ້ສິນທີ່ໄດ້ຮັບການຊໍາລະຄືນຖ້ວນແລ້ວ ຫຼື ໜີ້ທີ່ໄດ້ລ້າງອອກຈາກໃບສະຫຼຸບຊັບສິນບັດໃຫ້ເກັບໄວ້ໃນຖານຂໍ້ມູນ ແລະ ຮັກສາໄວ້ໃນຖານຂໍ້ມູນຕໍ່າສຸດ 5 ປີ.

### ມາດຕາ 12. ການເຂົ້າຫາຂໍ້ມູນຂ່າວສານສິນເຊື່ອ

1. ສະມາຊິກ ຂອງ ສຂສ ສາມາດເຂົ້າຊອກຫາຂໍ້ມູນຂອງລູກຄ້າຜູ້ສະເໜີຂໍສິນເຊື່ອ ຕາມຜະລິດຕະພັນ ທີ່ທະນາຄານ ແຫ່ງ ສປປ ລາວ ກໍານົດອອກ;
2. ສະມາຊິກ ຂອງ ສຂສ ສາມາດເຂົ້າຊອກຫາຂໍ້ມູນຂອງລູກຄ້າຜູ້ສະເໜີຂໍສິນເຊື່ອ ໂດຍຜ່ານລະຫັດຜູ້ນໍາໃຊ້ທີ່ ສຂສ ໄດ້ອອກໃຫ້;
3. ບຸກຄົນ ຫຼື ນິຕິບຸກຄົນທີ່ເປັນລູກຄ້າຂອງ ສະມາຊິກ ຂອງ ສຂສ ທີ່ຕ້ອງການຢາກຮູ້ຂໍ້ມູນຂ່າວສານສິນເຊື່ອຂອງຕົນເອງ ສາມາດຂໍຂໍ້ມູນໄດ້ຈາກ ສຂສ ທະນາຄານ ແຫ່ງ ສປປ ລາວ;
4. ບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ແມ່ນລູກຄ້າຂອງສະມາຊິກ ຂອງ ສຂສ ທີ່ຕ້ອງການຢາກຮູ້ຂໍ້ມູນຂ່າວສານສິນເຊື່ອຂອງບຸກຄົນ, ນິຕິບຸກຄົນໃດໜຶ່ງ ຕ້ອງໄດ້ຮັບການຍິນຍອມຈາກບຸກຄົນ, ນິຕິບຸກຄົນດັ່ງກ່າວ ເປັນລາຍລັກອັກສອນ ຈຶ່ງສາມາດສອບຖາມຂໍ້ມູນດັ່ງກ່າວນໍາ ສຂສ;
5. ການເຂົ້າຫາຂໍ້ມູນຂ່າວສານສິນເຊື່ອຂອງລູກຄ້າ ຈະຕ້ອງພິມອອກມາ ເພື່ອປະກອບເຂົ້າໃນສໍານວນຂໍສິນເຊື່ອຂອງລູກຄ້າ;

### ມາດຕາ 13. ໜັງສືຍິນຍອມ

ການປະກອບສໍານວນສິນເຊື່ອຂອງລູກຄ້າ ຕ້ອງມີໜັງສືຍິນຍອມຂອງລູກຄ້າເປັນລາຍລັກອັກສອນຕາມແບບພິມທີ່ ສຂສ ກໍານົດອອກ ຊຶ່ງເຫັນດີອະນຸຍາດໃຫ້ສະມາຊິກຂອງ ສຂສ ທະນາຄານ ແຫ່ງ ສປປ ລາວ ເປີດເຜີຍ ແລະ ນໍາໃຊ້ຂໍ້ມູນສ່ວນຕົວ, ຂໍ້ມູນສິນເຊື່ອ ແລະ ຂໍ້ມູນອື່ນໆ ຂອງລູກຄ້າ.

### ມາດຕາ 14. ການເກັບຄ່າບໍລິການ

1. ສຂສ ຈະຄິດໄລ່ຄ່າບໍລິການເຂົ້າຫາຂໍ້ມູນແບບອັດຕະໂນມັດ ໂດຍອີງຕາມການເຂົ້າຄົ້ນຫາຂໍ້ມູນຂ່າວສານສິນເຊື່ອແຕ່ລະຄັ້ງ;
2. ສະມາຊິກຂອງ ສຂສ ຕ້ອງໄດ້ຊໍາລະຄ່າບໍລິການການເຂົ້າຄົ້ນຫາຂໍ້ມູນປະຈໍາເດືອນ ບໍ່ເກີນວັນທີ 5 ຂອງເດືອນຕໍ່ມາ, ຖ້າກາຍກໍານົດດັ່ງກ່າວ ສຂສ ຈະຕັດເງິນຄ່າບໍລິການຈາກບັນຊີເງິນຝາກກະແສລາຍວັນ ຂອງສະມາຊິກທີ່ຝາກໄວ້ຢູ່ ທະນາຄານ ແຫ່ງ ສປປ ລາວ ແລ້ວຈະແຈ້ງ ໃຫ້ສະມາຊິກຕາມພາຍຫຼັງ.

ມາດຕາ 15. ຂໍ້ຫ້າມ

ຫ້າມສະມາຊິກ ຂອງ ສຂສ ດໍາເນີນການໃດໜຶ່ງດັ່ງລຸ່ມນີ້:

1. ເປີດເຜີຍຂໍ້ມູນຂ່າວສານສິນເຊື່ອຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກຈາກ ສຂສ;
2. ນໍາໃຊ້ຂໍ້ມູນຂ່າວສານສິນເຊື່ອຂອງລູກຄ້ານອກຂອບເຂດ ທີ່ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້;
3. ດໍາເນີນການແລກປ່ຽນຂໍ້ມູນຂ່າວສານສິນເຊື່ອໂດຍບໍ່ຜ່ານ ສຂສ.

ຫ້າມ ສຂສ ດໍາເນີນການໃດໜຶ່ງດັ່ງລຸ່ມນີ້:

ຫ້າມເປີດເຜີຍຂໍ້ມູນຂອງລູກຄ້າໃຫ້ບຸກຄົນ ແລະ ການຈັດຕັ້ງທີ່ບໍ່ແມ່ນສະມາຊິກຂອງ ສຂສ ເວັ້ນເສຍແຕ່ມີໜັງສືຈາກອົງການທີ່ມີອໍານາດ ຫຼື ຄະນະຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ.

## ໝວດທີ IV
## ການກວດກາ ແລະ ການລາຍງານ

ມາດຕາ 16. ການກວດກາສະມາຊິກ

ສຂສ ທະນາຄານ ແຫ່ງ ສປປ ລາວ ດໍາເນີນການກວດກາຂໍ້ມູນສິນເຊື່ອຂອງສະມາຊິກໄດ້ແບບປົກກະຕິ ແລະ ແບບສຸກເສີນ:

1. ການກວດກາແບບປົກກະຕິ ແມ່ນການກວດກາປະຈໍາປີ;
2. ການກວດກາແບບສຸກເສີນສາມາດກວດກາໄດ້ທຸກເວລາ ເມື່ອເຫັນວ່າມີຄວາມຈໍາເປັນໃນກໍລະນີມີຂໍ້ມູນສິ່ງໃສວ່າ: ສະມາຊິກລະເມີດລະບຽບການກ່ຽວກັບການສະໜອງ ແລະ ນໍາໃຊ້ຂໍ້ມູນຂ່າວສານສິນເຊື່ອທີ່ອາດຈະພາໃຫ້ເກີດບັນຫາຕໍ່ລະບົບຂອງ ສຂສ ຫຼື ມີຄວາມສ່ຽງທາງດ້ານການເງິນທີ່ອາດສ້າງຄວາມເສຍຫາຍໃຫ້ແກ່ສະມາຊິກ.

ສະມາຊິກ ທີ່ຖືກກວດກາຕ້ອງໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກໃຫ້ແກ່ຜູ້ກວດກາຂອງ ສຂສ ໂດຍການສະໜອງຂໍ້ມູນໃຫ້ຜູ້ກວດກາຢ່າງຄົບຖ້ວນ ແລະ ທັນເວລາ, ແຕ່ງຕັ້ງພະນັກງານຜູ້ຮັບຜິດຊອບວຽກງານຂໍ້ມູນສິນເຊື່ອຂອງຕົນເພື່ອເຮັດວຽກກັບຜູ້ກວດກາ.

ກ່ອນຈະດໍາເນີນການກວດກາຜູ້ກວດກາຂອງ ສຂສ ຕ້ອງແຈ້ງໃຫ້ສະມາຊິກຊາບ ເພື່ອກະກຽມເອກະສານ, ຂໍ້ມູນເພື່ອອໍານວຍຄວາມສະດວກໃຫ້ແກ່ການກວດກາ.

ພາຍຫຼັງສິ້ນສຸດການກວດກາແຕ່ລະຄັ້ງຜູ້ກວດກາຂອງ ສຂສ ຕ້ອງເຮັດບົດລາຍງານຜົນການກວດກາໂດຍການເຊັນຮັບຮອງຮ່ວມກັບສະມາຊິກທີ່ຖືກກວດກາ;

ມາດຕາ 17. ເນື້ອໃນການກວດກາ

1. ກວດສໍານວນເອກະສານສິນເຊື່ອຈາກສະມາຊິກ, ສົມທຽບຂໍ້ມູນໃນສໍານວນເອກະສານສິນເຊື່ອກັບຂໍ້ມູນໃນຖານຂໍ້ມູນ, ຂໍ້ມູນໃນແບບລາຍງານຕ່າງໆ;

2. ກວດກາສິນທຽບການປ່ອຍສິນເຊື່ອຂອງ ສະມາຊິກ ແລະ ໃນການເຂົ້າຄົ້ນຫາຂໍ້ມູນສິນເຊື່ອຂອງລູກຄ້າແຕ່ລະລາຍຕາມທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້;
3. ບັນຫາອື່ນທີ່ຕິດພັນກັບວຽກງານຂໍ້ມູນຂ່າວສານສິນເຊື່ອທີ່ເຫັນວ່າຈຳເປັນ.

### ມາດຕາ 18. ການກວດກາສູນຂໍ້ມູນຂ່າວສານສິນເຊື່ອ

ຄະນະກວດກາພາຍໃນ ທະນາຄານ ແຫ່ງ ສປປ ລາວ ດຳເນີນການກວດກາ ສຂສ ປີລະຄັ້ງຕາມປີການບັນຊີ ຫຼື ເມື່ອເຫັນວ່າມີຄວາມຈຳເປັນ. ຄະນະກວດກາພາຍໃນ ທະນາຄານ ແຫ່ງ ສປປ ລາວ ສາມາດກວດກາບັນຊີລາຍຮັບ, ຄ່າບໍລິການ ແລະ ລາຍຈ່າຍຕ່າງໆ ຫຼື ກວດກາການປະຕິບັດລະບຽບກົດໝາຍ, ການດຳເນີນງານປະຈຳວັນ, ກວດກາຂໍ້ມູນໃນລະບົບຖານຂໍ້ມູນ, ກວດກາຜະລິດຕະພັນ ແລະ ການບໍລິການຂອງ ສຂສ.

### ມາດຕາ 19. ການລາຍງານ

1. ສຂສ ຕ້ອງປະຕິບັດລະບອບລາຍງານການເຄື່ອນໄຫວວຽກງານຂອງຕົນໃຫ້ຄະນະກຳມະການ ຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ;
2. ສະມາຊິກຂອງ ສຂສ ຕ້ອງປະຕິບັດລະບອບລາຍງານຕາມລະບຽບການຂອງ ສຂສ ວາງອອກ.

## ໝວດທີ V
## ການແກ້ໄຂຂໍ້ຂັດແຍ່ງ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 20. ການແກ້ໄຂຂໍ້ຂັດແຍ່ງ

ລູກຄ້າຂອງສະມາຊິກ ຫາກພົບເຫັນຂໍ້ມູນສິນເຊື່ອຂອງຕົນທີ່ມີຄວາມຜິດພາດ ສາມາດຍື່ນຄຳຮ້ອງຫາ ສຂສ ເພື່ອແກ້ໄຂຂໍ້ມູນທີ່ຜິດພາດດັ່ງກ່າວ. ເນື້ອໃນຄຳຮ້ອງດັ່ງກ່າວຕ້ອງຍົກໃຫ້ເຫັນຂໍ້ມູນທີ່ຜິດພາດ ແລະ ຄວາມຕ້ອງການໃນການແກ້ໄຂ.

ພາຍຫຼັງໄດ້ຮັບຄຳຮ້ອງຈາກລູກຄ້າຂອງສະມາຊິກ ສູນຂໍ້ມູນຂ່າວສານສິນເຊື່ອຕ້ອງກວດກາຂໍ້ມູນດັ່ງກ່າວ ເພື່ອແກ້ໄຂຄຳຮ້ອງຂໍຂອງລູກຄ້າພາຍໃນກຳນົດເວລາ 30 ວັນເຮັດວຽກທະນາຄານ. ສຂສ ຕ້ອງແຈ້ງຜົນການແກ້ໄຂຄຳຮ້ອງຂອງລູກຄ້າເປັນລາຍລັກອັກສອນ ແຈ້ງໂດຍກົງ ຫຼື ແຈ້ງຜ່ານທາງໄປສະນີ ຫຼື ເຄື່ອງມືອເລັກໂທຣນິກກໍ່ໄດ້.

### ມາດຕາ 21. ມາດຕະການຕໍ່ຜູ້ລະເມີດ

ສະມາຊິກ ຂອງ ສຂສ ຫາກລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຕາມກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍມາດຕະການຕໍ່ການລະເມີດຂອງທະນາຄານທຸລະກິດ ທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ.

ສະມາຊິກ ຂອງ ສຂສ ສາມາດຍື່ນຄຳຮ້ອງຕໍ່ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ກ່ຽວກັບການປະຕິບັດມາດຕະການຕໍ່ຕົນທີ່ເຫັນວ່າບໍ່ເໝາະສົມ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

### ມາດຕາ 22. ການຈັດຕັ້ງປະຕິບັດ

ສະມາຊິກ ແລະ ສຂສ ທະນາຄານ ແຫ່ງ ສປປ ລາວ ຕ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຄັ່ງຄັດ.

### ມາດຕາ 23. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນກົດລະບຽບກ່ຽວກັບສູນຂໍ້ມູນສິນເຊື່ອ ຂອງທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 03/ທຫລ, ລົງວັນທີ 08 ພະຈິກ 2001 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກຳນົດ, ກົດລະບຽບກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອທີ່ປະກາດໃຊ້ໃນເມື່ອກ່ອນ ທາກຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສົມພາວ ໄພສິດ